ບຸນກວ້າງເອີຍ!

ບໍ່ເສັຍແຮງທີ່ຊ່ວຍເພີ້ມ    ເຍີ້ຍຕື່ນທັງວາງແຜນ ຣິ ! ຣິ ! ຣິ !
ແຍ່ຮັງແຕນທີ່ເຂົາລື    ບາດຫວື່ນມາຈິບຍ້ານ
ລູກສິດອາຈານສຸ້ຍ    ລຸຍເລີຍບໍ່ເສັຍຊື່
ອາຈານຕື້ ຜູ້ທອດຖອນສິ່ງໃຫ້    ໄດ້ຂຽນແຕ້ມແຕ່ງກອນ    ກວ້າງເອີຍ

ອ່ານແລ້ວໃຈສະທ້ອນ    ອາວອນຖິ່ນດິນຫຼັກເຈັດ    ຄິດຮອດເດ
ເຮັດໃຫ້ເຮົາຊາວຄຣູ    ຄູ່ຊູ່ຄືນທີ່ໃກບ້ານ
ດິນຫຼັກເຈັດຍັງຝັງຫມັ້ນ    ຄຣູອາຈານທຸກໆທ່ານ
ສາບານຍົກໃສ່ເກົ້າ    ພຣະຄຸນເຈົ້າແມ່ນບໍ່ລືມ    ທ່ານເອີຍ

ບໍ່ພຽງຂຽນໃສ່ປຶ້ມ    ຊາບຊຶມຢູ່ໃນສມອງ
ລ່ອງລົງເຖິງຈິດໃຈ    ບໍ່ໄດ້ໄລລືມຖິ້ມ
ນາມແມ່ພິມໄດ້ດັງກ້ອງ    ເນືອງນອງໃຫ້ເຂົາຊ່າ
ຊາວລາວທົ່ວໂລກາ    ດຽວນີ້ໄດ້ຮັບຮູ້    ສາວຄຣູແຕ້ມແຕ່ງກອນ    ກວ້າງເອີຍ

ສີພັນດອນ ຜູ້ຮູ້    ຈຶ່ງອວນຫມູ່ ທັງຫຼາຍ
ໃຫ້ມາຢາຍກອນຂຽນ    ສິ່ງວຽນວົນເອີ້ນ
ເຊີນທັງອາຈານພ້ອມ    ມາດອມກັນຄືຊິມ່ວນ
ຊັກຊວນທຸກທົ່ວຫນ້າ    ຫັນມາພີ້ ຊິກ່າວກອນ ທ່ານເອີຍ

ອີກສອງປີຈຶ່ງຊິຍ້ອນ    ພົບກັນຕໍ່ຊາວຫຼັກເຈັດ
ເຮັດໃຫ້ສົມຄຳລື    ຊື່ນາມປາກກາກ້ອງ
ອີກສອງປີທາງຫນ້າ    ການາດາ ບ່ອນຫມາຍຈວບ

ຄວບກັນໃນທີ່ນັ້ນ      ສົມພັນກ້ຽວກ່ຽວຄືນ

ການພົບກັນຕ້ອງລາບລື້ນ      ສຸກຊື່ນສົມໃຈ
ຈາກແດນໄກໃຫ້ເດີນມາ      ໂລກຊ່າກັນດັງກ້ອງ
ຄັ້ງທີສອງພວກເຮົາໄດ້      ບົດຮຽນຫຼາຍມາຖອນຖອດ
ມາລວມຍອດນັກສູ້      ຊາວຄຣູກ້ອງຊື່ດັງ

ເມືອງຝຣັ່ງເພິ່ນຊິຍ້ອນ      ຕຽມກ່ອນແຕ່ຫົວປີ  ວ່າຊັ້ນ
ມີສຸໄດລູກສາວຄຣູ      ອີກເພື່ອນໜູແມ່ນບຸນກວ້າງ
ອະດີດນາງງາມນັ້ນ      ຄອນສວັນຊິມາຮ່ວມ
ລວມທັງເອື້ອຍທ່ອນແກ້ວ      ແຊວໆເອີ້ນອ່ານແຕ່ກ່ອນ

ເອື້ອຍສົມພານ ! ນ້ອງຊິຂໍຮັບຕ້ອນ      ຕອນເອື້ອຍດ່ວນມາເຖິງ
ໃຫ້ລື້ນເລີງສົມຈິດ      ຄິດວ່າສົມມະໂນແມ້ງ
ກຸຫຼາບຂາວ ຊິເລີ້ມແປງທາງໄວ້      ຈົ່ງຕຽມໃຈຢ່າໃຫ້ພາດ
ໂອກາດມາຮອດໃກ້      ເຮົາຊິໄດ້ພົບກັນ  ອີກແລ້ວ

ໂດຍ: ສີພັນດອນ      ດອກບົວກາງວັນ